ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມການນຳເຂົ້າ ແລະ ສົ່ງອອກ

ເລກທີ 0826 /ກຂອ
ນະຄອນຫຼວງວຽງຈັນ, ວັນທີ 02 ມິນາ 2022

# ແຈ້ງການ

**ເຖິງ:** ບັນດາຫົວໜ່ວຍທຸລະກິດ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງ.
**ເລື່ອງ:** ມາດຕະຖານການບໍລິການ ຂອງກົມການນຳເຂົ້າ ແລະ ສົ່ງອອກ.

- ອີງຕາມ ຄຳສັ່ງ ວ່າດ້ວຍການປັບປຸງບັນດາລະບຽບການ ແລະ ກົນໄກການປະສານງານໃນການດຳເນີນທຸລະກິດ ຢູ່ ສປປ ລາວ ເລກທີ 02/ນຍ, ລົງວັນທີ 01 ກຸມພາ 2018;
- ອີງຕາມ ຄຳສັ່ງ ວ່າດ້ວຍການອຳນວຍຄວາມສະດວກໃຫ້ແກ່ການນຳເຂົ້າ-ສົ່ງອອກ, ການນຳເຂົ້າຊົ່ວຄາວ, ການຜ່ານແດນ ແລະ ການເຄື່ອນຍ້າຍສິນຄ້າ ຢູ່ ສປປ ລາວ ເລກທີ 12/ນຍ, ລົງວັນທີ 16 ຕຸລາ 2019;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມການນຳເຂົ້າ ແລະ ສົ່ງອອກ ເລກທີ 1163/ອຄ, ລົງວັນທີ 01 ກໍລະກົດ 2016;
- ອີງຕາມ ບົດລາຍງານການສຶກສາເວລາກວດປ່ອຍສິນຄ້າ (Time Release Study: TRS) ຢູ່ ສປປ ລາວ ປີ 2020.

ເພື່ອປັບປຸງ ແລະ ຍົກລະດັບການບໍລິການອອກໃບອະນຸຍາດ, ໃບຢັ້ງຢືນ ການນຳເຂົ້າ-ສົ່ງອອກ, ຜ່ານແດນ, ນຳເຂົ້າເພື່ອສົ່ງອອກຕໍ່, ນຳເຂົ້າ ແລະ ສົ່ງອອກ ຊົ່ວຄາວ ຂອງກົມການນຳເຂົ້າ ແລະ ສົ່ງອອກ ໃຫ້ມີຄວາມກະທັດຮັດ, ວ່ອງໄວ, ໂປ່ງໃສ ແລະ ທັນເປັນທັນສະໄໝເທື່ອລະກ້າວ

## ກົມການນຳເຂົ້າ ແລະ ສົ່ງອອກ ອອກແຈ້ງການ:

1. ມາດຕະຖານການບໍລິການ ຂອງກົມການນຳເຂົ້າ ແລະ ສົ່ງອອກ ມີລາຍລະອຽດດັ່ງລຸ່ມນີ້:

| ລ/ດ | ການບໍລິການ | ເວລາທີ່ໃຊ້ ໃນປີ 2018 | ເວລາທີ່ໃຊ້ ໃນປະຈຸບັນ |
|---|---|---|---|
| 1 | ອອກໃບອະນຸຍາດນຳເຂົ້າ ຍານພາຫະນະ ແລະ ນ້ຳມັນເຊື້ອໄຟ | | |
| | 1.1 ແບບເຈ້ຍ | 2 ວັນ | 1 ວັນ |
| | 1.2 ແບບເອເລັກໂຕຣນິກ ຜ່ານລະບົບແຈ້ງພາສີແບບປະຕູດຽວແຫ່ງຊາດລາວ (Lao National Single Window: LNSW) | 1 ວັນ | 1 ວັນ |
| 2 | ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ | | |
| | 2.1 ແບບເຈ້ຍ | 4 ຊົ່ວໂມງ | 2 ຊົ່ວໂມງ |
| | 2.2 ແບບເອເລັກໂຕຣນິກ (E-CO) | 2 ຊົ່ວໂມງ | 1 ຊົ່ວໂມງ |

| | | | |
|---|---|---|---|
| 3 | ອອກໃບອະນຸຍາດນຳເຂົ້າ ໄມ້ທ່ອນ, ຕໍໄມ້, ປູດໄມ້, ໄມ້ແປຮູບ, ໄມ້ເຄິ່ງສຳເລັດຮູບ (ແບບເຈ້ຍ) | - | 10 ວັນ |
| 4 | ອອກໃບອະນຸຍາດ, ຢັ້ງຢືນ ການນຳເຂົ້າ ແລະ ສົ່ງອອກ ເພັດຫຍາບ ແລະ ເພັດທີ່ເຈຍລະໄນ (ແບບເຈ້ຍ) | 2 ວັນ | 1 ວັນ |
| 5 | ອອກໃບອະນຸຍາດ, ຢັ້ງຢືນ ສິນຄ້າຜ່ານແດນ, ນຳເຂົ້າເພື່ອສົ່ງອອກຕໍ່, ນຳເຂົ້າ ແລະ ສົ່ງອອກ ຊົ່ວຄາວ (ແບບເຈ້ຍ) | 2 ວັນ | 2 ວັນ |
| 6 | ອອກໃບອະນຸຍາດດຳເນີນທຸລະກິດນຳເຂົ້າ ແລະ ສົ່ງອອກຍານພາຫະນະ<br>(ແບບເຈ້ຍ) | - | 5 ວັນ |
| 7 | ອອກໃບອະນຸຍາດດຳເນີນທຸລະກິດ ນຳເຂົ້າ ແລະ ສົ່ງອອກວັດຖຸມີຄ່າ<br>(ແບບເຈ້ຍ) | - | 3 ວັນ |

<u>ໝາຍເຫດ</u>:

- ເວລາ 1 ວັນ ເທົ່າກັບ 8 ຊົ່ວໂມງລັດຖະການ.
- ເວລາທີ່ໃຊ້ໃນຕາຕະລາງຂ້າງເທິງ ບໍ່ລວມເອົາເວລາທີ່ໃຊ້ໃນກໍລະນີຕ່າງໆດັ່ງນີ້:
  - ການດັດແກ້ ຫຼື ປະກອບເອກະສານຄືນຂອງຜູ້ຍື່ນເອກະສານ ຖ້າເອກະສານບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງ.
  - ການປະສານງານ ກັບ ຂະແໜງການທີ່ກ່ຽວຂ້ອງ ຢູ່ພາຍໃນ ແລະ ຕ່າງປະເທດ ຂອງເຈົ້າໜ້າທີ່ອອກໃບອະນຸຍາດ ຫຼື ຢັ້ງຢືນ, ການລົງກວດກາສະຖານທີ່ຕົວຈິງ ເພື່ອຢືນຢັນຄວາມຖືກຕ້ອງຂອງເອກະສານ.
  - ບັນຫາດ້ານເຕັກນິກຂອງລະບົບເອເລັກໂຕຼນິກ ເຊັ່ນ: ອິນເຕີເນັດ, ລະບົບຂັດຂ້ອງ, ໄຟຟ້າດັບ ແລະ ອື່ນໆ.

2. ມອບໃຫ້ບັນດາພະແນກອ້ອມຂ້າງກົມການນຳເຂົ້າ ແລະ ສົ່ງອອກ ພ້ອມກັບຈັດຕັ້ງປະຕິບັດແຈ້ງການສະບັບນີ້ຢ່າງເຂັ້ມງວດ ແລະ ເຜີຍແຜ່ໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງ ຊາບຢ່າງທົ່ວເຖິງ.

3. ແຈ້ງການສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີລົງລາຍເຊັນ ເປັນຕົ້ນໄປ ແລະ ປ່ຽນແທນ ແຈ້ງການ ເລກທີ 4186/ກຂອ, ລົງວັນທີ 12 ກັນຍາ 2018.

ຫົວໜ້າກົມ

ນ. ມະນີວອນ ວົງໄຊ

**<u>ສອບຖາມຂໍ້ມູນເພີ່ມເຕີມ:</u>**

ກໍລະນີພົບຂໍ້ຫຍຸ້ງຍາກ ຫຼື ມີຂໍ້ສະເໜີປັບປຸງ ໃຫ້ດີຂຶ້ນ ສາມາດຕິດຕໍ່:

ພະແນກອຳນວຍຄວາມສະດວກທາງດ້ານການຄ້າ, ກົມການນຳເຂົ້າ ແລະ ສົ່ງອອກ


- ໂທ/ແຟັກ: 021 454224
- ອີເມລ໌: *ltpenquiry@moic.gov.la*